ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ຄະນະເກັບກຳຂໍ້ມູນ ທຫລ
# ເດີນທາງທັດສະນະສຶກສາຮ່ອງຮອຍປະຫວັດສາດ





ໃນລະຫວ່າງວັນທີ 7-13 ມັງກອນ 2018 ຄະນະເກັບກຳຂໍ້ມູນກ່ຽວກັບຫ້ອງສະຫມຸດ ແລະ ວັດຖຸພັນ ເຊິ່ງນຳໂດຍທ່ານ ພູວຽງ ແສງດາວົງ ຮອງຫົວໜ້າຫ້ອງການ ທຫລ ໄດ້ເດີນທາງສູ່ແຂວງຊຽງຂວາງ ແລະ ແຂວງຫົວພັນ ເພື່ອຖອດຖອນບົດຮຽນການຈັດຕັ້ງການເຄື່ອນໄຫວວຽກງານຫ້ອງສະໝຸດ ແລະ ບັນດາຂໍ້ມູນປະຫວັດສາດກ່ຽວກັບການກຳເນີດ ແລະ ເຕີບໃຫ່ຍຂະຫຍາຍຕົວຂອງທະນາຄານແຫ່ງ ສປປ ລາວ ທີ່ຖ້ຳທະນາຄານ.

ໃນລະຫວ່າງການເດີນທາງຄືວັນທີ 8 ມັງກອນ 2018 ຄະນະດັ່ງກ່າວ ໄດ້ເຂົ້າຮ່ວມຮັບຟັງ ແລະ ແລກປ່ຽນບົດຮຽນກ່ຽວກັບ ການເກັບຮັກສາເອກະສານ, ການເກັບກຳປື້ມຕຳລາ ແລະ ການໃຫ້ບໍລິການດ້ານຫ້ອງສະໝຸດທີ່ວິທະຍາໄລຄູຄັງໄຂ, ແຂວງຊຽງຂວາງ. ພ້ອມນັ້ນ, ກໍ່ໄດ້ເຂົ້າຢ້ຽມຊົມຫ້ອງວາງສະແດງມູນເຊື້ອ ແລະ ຮ່ອງຮອຍປະຫວັດສາດ, ອາຄານສຳນັກງານ, ຫ້ອງຮຽນ ແລະ ຫ້ອງສິລະປະຂອງວິທະຍາໄລດັ່ງກ່າວ.






ຈາກນັ້ນ, ໃນວັນທີ 10 ມັງກອນ 2018 ຄະນະດັ່ງກ່າວ ກໍ່ໄດ້ເຂົ້າສຶກສາ ແລະ ເກັບກຳຂໍ້ມູນການເຄື່ອນໄຫວປະຕິວັດຂອງບັນດາທ່ານຜູ້ນຳຢູ່ເມືອງວຽງໄຊ, ແຂວງຫົວພັນ ໂດຍໄດ້ເຂົ້າຊົມຖໍ້າທີ່ພັກຂອງປະທານ ໄກສອນ ພົມວິຫານ ເລຂາທິການໃຫ່ຍພັກປະຊາຊົນປະຕິວັດລາວ ເຊິ່ງໃນນັ້ນມີທັງຫ້ອງປະຊຸມ, ຫ້ອງເຮັດວຽກ ທີ່ເປັນສູນກາງບັນຊາການໃນທົ່ວປະເທດ; ຈາກນັ້ນ ຄະນະດັ່ງກ່າວກໍ່ໄດ້ສືບຕໍ່ຢ້ຽມຊົມ ແລະ ເກັບກຳຂໍ້ມູນລາຍລະອຽດກ່ຽວກັບຄວາມເປັນມາ ລວມທັງພາບຖ່າຍຖໍ້າທະນາຄານ ເຊິ່ງເປັນບ່ອນກຳເນີດທະນາຄານແຫ່ງ ສປປ ລາວ ໃນປະຈຸບັນ.









 

ມື້ຕໍ່ມາຄະນະເກັບກຳຂໍ້ມູນຍັງສືບຕໍ່ຢ້ຽມຢາມ ແລະ ສຳພາດ ທ່ານ ນາງ ອັດ ເຊິ່ງເປັນພະນັກງານອາວຸໂສບຳນານທີ່ເມືອງຊຳເໜືອ, ແຂວງຫົວພັນ ເຊິ່ງໃນອະດີດທ່ານເຄີຍປະຕິບັດໜ້າທີ່ໃນທະນາຄານຝ່າຍ ປະເທດລາວ ນັບແຕ່ປີ 1975 ຢູ່ຖ້ຳສຳນັກງານທະນາຄານ ເມືອງວຽງໄຊ ໂດຍທ່ານໄດ້ເລົ່າຄືນບາງບັນຫາ ແລະ ສະພາບການທີ່ຕົນໄດ້ເຄື່ອນໄຫວໃນໄລຍະນັ້ນ ລວມທັງໜ້າທີ່ຮັບຜິດຊອບຂອງເພິ່ນເອງໃຫ້ແກ່ຄະນະເກັບກຳຂໍ້ມູນໄດ້ຮັບຮູ້.

 

ວັນທີ 12 ມັງກອນ 2018 ໃນຂະນະທີ່ເດີນທາງກັບ ຄະນະກໍ່ໄດ້ເຂົ້າສຶກສາຂໍ້ມູນຮ່ອງຮອຍປະຫວັດສາດທີ່ຖ້ຳປິວ ເມືອງຄຳ, ແຂວງຊຽງຂວາງ. ເຊິ່ງເປັນໂສກນາດຕະກຳ ແລະ ເປັນເຫດການທີ່ໂສກເສົ້າຂອງປະຊາຊົນຊາວເມືອງຄຳ, ແຂວງຊຽງຂວາງ ກໍ່ຄືຊາວລາວທົ່ວປະເທດບໍ່ມີວັນຈະຫຼົງລືມ, ໂດຍເຫດການເກີດຂຶ້ນໃນວັນທີ 24/11/1968 ຈັກກະພັດອາເມລິກາໄດ້ນຳຍົນມາຍິງລະເບີດນາປານເຂົ້າໃສ່ຖ້ຳປິວອັນໄດ້ດັບຊີວິດ 374 ຄົນ ພາຍໃນວິນາທີດຽວ ເຊິ່ງເຫດການດັ່ງກ່າວມັນຍັງຄົງຝັງເລິກໃນຈິດໃຈຂອງຊາວລາວ ກໍ່ຄືຊາວຊຽງຂວາງຕະຫຼອດໄປ.





ມາເຖິງວັນທີ 13 ມັງກອນ 2018 ຄະນະເກັບກຳຂໍ້ມູນຂອງທະນາຄານແຫ່ງ ສປປ ລາວ ກໍ່ໄດ້ເດີນທາງກັບນະຄອນຫຼວງວຽງຈັນ.

**# ພາບ - ຂ່າວ: ສົມອົກ ເຄນຄໍາແພງ**